ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂ
ລະເບີດບໍ່ທັນແຕກ ທີ່ຕົກຄ້າງ ຢູ່ ສປປ ລາວ
ຫ້ອງການ

ເລກທີ ໘໑໘ /ຫຄຊກລ
ນະຄອນຫລວງວຽງຈັນ, ວັນທີ ໒໒ ກັນຍາ ໒໐໒໓

# ໜັງສືລາຍງານ

**ຮຽນ:** ທ່ານ ຫົວໜ້າຫ້ອງການ ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂລະເບີດບໍ່ທັນແຕກທີ່ຕົກຄ້າງຢູ່ ສປປ ລາວ ທີ່ນັບຖື.

**ເລື່ອງ:** ຜົນສຳເລັດກອງປະຊຸມກຸ່ມວິຊາການໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ປະຈຳໄຕ ມາດ 03 ແລະ ແຜນວຽກຈຸດສຸມ ໄຕມາດ 04, 2023.

- ອີງຕາມ ຂໍ້ຕົກລົງ ລັດຖະມົນຕີ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ສະບັບເລກທີ 4999/ຮສສ ,ລົງວັນທີ 09 ທັນວາ 2022 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ຫ້ອງການ ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງ ຢູ່ ສປປ ລາວ.
- ອີງຕາມ ແຜນການເຄື່ອນໄຫວ ປະຈຳໄຕມາດ 02,2023 ຂອງໜ່ວຍງານຄຸ້ມຄອງໂຄສະນາສຶກສາຄວາມສ່ຽງໄພ ຈາກ ລບຕ ຫ້ອງການ ຄຊກລ.

ໜ່ວຍງານຄຸ້ມຄອງໂຄສະນາສຶກສາຄວາມສ່ຽງໄພ ຈາກ ລບຕ ຫ້ອງການ ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂລະເບີດບໍ່ທັນແຕກ ທີ່ ຕົກຄ້າງ ຢູ່ ສປປ ລາວ ຂໍຖືເປັນກຽດລາຍງານມາຍັງທ່ານເພື່ອຊາບກ່ຽວກັບຜົນສຳເລັດກອງປະຊຸມວິຊາການໂຄສະນາຜົນຮ້າຍຂອງ ລບຕ, ປະຈຳໄຕ ມາດ 03 ແລະ ແຜນວຽກຈຸດສຸມ ໄຕມາດ 04, 2023 ກອງປະຊຸມດັ່ງກ່າວໄດ້ຈັດຂຶ້ນໃນຕອນເຊົ້າ ຂອງວັນທີ 18 ກັນຍາ 2023, ທີ່ຫ້ອງການ ຄຊກລ ໂດຍການເປັນປະທານ ຂອງ ທ່ານ ບຸນເພັງ ສີສະຫວັດ ຮອງຫົວໜ້າຫ້ອງການ ຄຊກລ ລາຍລະອຽດມີດັ່ງລຸ່ມນີ້:

1. ຈຸດປະສົງ.
   - ເພື່ອລາຍງານການຈັດຕັ້ງປະຕິບັດ ວຽກງານ ໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ໄຕມາດ 03, 2023 ແລະ ແຜນວຽກຈຸດສຸມ ໄຕມາດ 04 ປີ 2023;
   - ທົບທວນຜົນຂອງກອງປະຊຸມວິຊາການ ໃນໄຕມາດ 02 ອັນໃດທີ່ຈັດຕັ້ງປະຕິບັດສຳເລັດ ແລະ ແລະ ອັນໃດທີ່ສືບຕໍ່;
   - ອັດເດດສະຖິຕິການເກີດອຸປະຕິເຫດ ຈາກ ລບຕ ຜູ້ຮັບບາດເຈັບ ແລະ ເສຍຊີວິດ ປະຈຳໄຕມາດ 03 ປີ 2023;

- ລາຍງານຜົນຂອງການລົງຕິດຕາມຊຸກຍູ້ ວຽກໂຄສະນາສຶກສາຄວາມສ່ຽງໄພ ຈາກ ລບຕ ຢູ່ ແຂວງອັດຕະປື; ແຂວງສາລະວັນ ແລະ ອົງການ ຊ່ວຍເຫຼືອຂອງປະຊາຊົນນັອກແວ ໃນໄຕມາດ 03;
- ທົບທວນຮ່າງແບບຟອມລາຍງານເຂົ້າຖານຂໍ້ມູນ;
- ລາຍງານການຈັດຕັ້ງປະຕິບັດຄວາມຄືບໜ້າ ບົດບາດຍິງ-ຊາຍ ໃນກຸ່ມວິຊາການໃນວຽກງານໂຄສະນາສຶກສາ ຄວາມສ່ຽງໄພຈາກ ລບຕ;
- ລາຍງານຜົນສຳເລັດການຈັດຕັ້ງປະຕິບັດ ວຽກງານຄຸ້ມຄອງໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ 9 ເດືອນ ຕົ້ນປີ ແລະ ແຜນການ 3 ເດືອນ ທ້າຍປີ 2023
- ທົບທວນກ່ຽວກັບມາດຕະຖານແຫ່ງຊາດ ບົດທີ່ 13 ທີ່ຕິດພັນກັບວຽກໂຄສະນາສຶກສາຄວາມສ່ຽງໄພ ຈາກ ລບຕ;
- ປຶກສາຫາລື ແລະ ແລກປ່ຽນບົດຮຽນປະສົບການ ກ່ຽວກັບການຈັດຕັ້ງປະຕິບັດວຽກງານໂຄສະນາຜົນຮ້າຍຂອງ ລບຕ.

2. ຜູ້ເຂົ້າຮ່ວມກອງປະຊຸມ

ກົມອົງການຈັດຕັ້ງສາກົນ ກະຊວງການຕ່າງປະເທດ, ກົມກິລາມວນຊົນ, ພາລະ ແລະ ສົນລະປະສຶກສາ ກະຊວງສຶກສາທິການ ແລະ ກິລາ, ກົມການສຶກສານອກໂຮງຮຽນ,ກົມສ້າງຄູ, ສະຖາບັນຄົ້ນຄວ້າການສຶກສາວິທະຍາສາດ ກະຊວງສຶກສາທິການ ແລະ ກິລາ, ກົມສື່ມວນຊົນ ກະຊວງຖະແຫຼງຂ່າວ ວັດທະນາທຳ ແລະ ທ່ອງທ່ຽວ, ກົມຂະໜວນການ ສູນກາງຊາວໜຸ່ມ ປະຊາຊົນປະຕິວັດລາວ, ໜ່ວຍງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ຈາກ ລບຕ, ຫ້ອງການ ຄຊກລ, ກອງກວດກູ້ລະເບີດເພື່ອມະນຸດສະທຳ 58, ວິທະຍຸກະຈາຍສຽງແຫ່ງງຊາດ, ຊ່ຽວຊານ ຈາກ ສະຫະປະຊາຊາດເພື່ອການພັດທະນາ ປະຈຳ ສປປ ລາວ, ໂຄງການເກັບກູ້ລະເບີດແຫ່ງຊາດ, ອົງການເພື່ອມະນຸດສະທຳ ແລະ ການມີສ່ວນຮ່ວມ (HI), ອົງການ ຮາໂລທັດ, ອົງການເທີຣາ ຣິນາຍຊານ ປະຈຳແຂວງຊຽງຂວາງ, ອົງການແມັກ (MAG), ອົງການເອັນພີເອ ປະຈຳ ສປປ ລາວ (NPA), ອົງການສຶກສາໂລກ ປະຈຳ ສປປ ລາວ (WEL).

3. ການດຳເນີນກອງປະຊຸມ

ກອງປະຊຸມໄດ້ດຳເນີນໄປຕາມວາລະ ໄດ້ຮັບຟັງການນຳສະເໜີຂອງບັນດາອົງການປະຕບັດງານ ໃນການຈັດຕັ້ງປະຕິບັດວຽກໂຄສະນາຜົນຮ້າຍຂອງ ລບຕ ຂໍ້ສະດວກ, ບັນຫາ ແລະ ສິ່ງທ້າທາຍ ແລະ ແຜນການເຄື່ອນໄຫວໃນໄຕມາດ 04, 2023 ຈາກນັ້ນ ຕາງໜ້າໜ່ວຍງານຄຸ້ມຄອງໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ໄດ້ນຳສະເໜີຜົນຂອງການລົງຕິດຕາມ ຊຸກຍູ້ໃນໄຕມາດ 3 ໜ່ວຍງານຄຸ້ມຄອງໂຄສະນາ ຕ້ອງເປັນເຈົ້າໃນການຕິດຕາມການເຄື່ອນໄຫວຂອງອົງການປະຕິບັດງານ ເພາະມີບາງອົງການແມ່ນບໍ່ໄປຕາມແຜນ, ມີການຄາດເຄືອນ (ເຊິ່ງສະແດງອອກໃນຕົວຊີ້ວັດໜ້າວຽກບໍ່ສຳເລັດ) ແລະ ພະນັກງານທີ່ເຮັດວຽກໂຄສະນາສຶກສາຄວາມສ່ຽງໄພ ຈາກ ລບຕ ຕ້ອງໄດ້ຊຸກຍູ້ໃຫ້ອົງການ ຂຶ້ນແຜນງົບປະມານ ຈັດຝຶກອົບຮົມຫຼັກສູດໂຄສະນາ ເພື່ອສ້າງຄວາມເຂັ້ມແຂງ ແລະ ເຮັດວຽກໂຄສະນຜົນຮ້າຍຂອງ ລບຕ ໄດ້ຮັບປະສິດທິພາບ ແລະ ປະສິດທິຜົນ ຫຼັງຈາກນັ້ນ ຫົວໜ້າຫົວໜ້າງານຄຸ້ມຄອງໂຄສະນາສຶກສາຄວາມສ່ຽງໄພ ຈາກ ລບຕ ໄດ້ລາຍງານໃຫ້ທີ່ປະຊຸມໄດ້ຮັບຊາບ ກ່ຽວກັບຜົນຂອງກອງປະຊຸມວິຊາການ ໄຕມາດ 02 ອັນໃດທີ່ຕົກລົງກັນ ແລະ ຈັດຕັ້ງປະຕິບັດສຳເລັດ ແລະ ອັນໃດທີ່ຈະຕ້ອງສືບຕໍ່ ພ້ອມນັ້ນຍັງນຳສະເໜີຜົນສຳເລັດຂອງການຈັດຕັ້ງປະຕິບັດວຽກຄຸ້ມຄອງໂຄສະນາສຶກສາຄວາມສ່ຽງໄພ ຈາກ ລບຕ 9 ເດືອນຕົ້ນປີ ແລະ ແຜນການ 3 ເດືອນທ້າຍປີ 2023 ສືບຕໍ່ຕິດຕາມຊຸກຍູ້ ວຽກໂຄສະນາ ແລະ ຈັດສັນງົບປະມານທີຍັງເຫຼືອຈາກ ການຈ່າຍຄ່າໂຄສະນາຜົນຮ້າຍຂອງ ລບຕ ຜ່ານທາງລາຍ ວິທະຍຸ 10 ແຂວງ ມາເຂົ້າໃນການຈັດຝຶກອົບຮົມການສ້າງແຜນ, ຂຽນຂ່າວ, ຜະລິດສະປອດໂຄສະນາ ເພື່ອພັດທະນາສື່ໂຄສະນາຜົນຮ້າຍຂອງ ລບຕ ໃຫ້ແກ່ພະນັກງານວິທະຍຸ 10 ແຂວງ. ຄົ້ນຄວ້າ ຂໍງົບປະມານ ນຳ ບໍລິສັດ

ເຫຣັກທາເຫຣັກ ເພື່ອມາຈັດຝຶກອົບຮົມໃຫ້ກັບຊາວໜຸ່ມອາສາສະໝັກຂັ້ນບ້ານ ຮ່ວມກັບສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ 3 ແຂວງໃໝ່ ປະກອບດ້ວຍ ແຂວງຫຼວງພະບາງ, ແຂວງຫົວພັນ ແລະ ແຂວງຜົ້ງສາລີ ຕາມເອກະພາບໃນກອງປະຊຸມປະຈຳປີ ຮ່ວມກັບຊາວໜຸ່ມ ໃນຄັ້ງວັນທີ 21-22 ສິງຫາ 2023 ທີ່ທາລາດ ແຂວງວຽງ ຕໍ່ຈາກນັ້ນກອງປະຊຸມກໍ່ໄດ້ຮັບຟັງລາຍງານ ການເກີດອຸປະຕິເຫດ ຈາກໜ່ວຍງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ຈາກ ລບຕ ໃນໄຕມາດ 03, 2023. ມີອຸປະຕິເຫດເກີດຂຶ້ນ 16 ຄັ້ງ ຜູ້ໄດ້ຮັບເຄາະຮ້າຍ ທັງໝົດ 28 ຄົນ (ຍິງ 10 ຄົນ, ຊາຍ 18 ຄົນ ) ບາດເຈັບ 21 ຄົນ ແລະ ເສຍຊີວິດ 07 ຄົນ, ຜູ້ໃຫ່ຍທັງໝົດ 03 ຄົນ (ຍິງ 01 ຄົນ, ຊາຍ 02 ຄົນ) ບາດເຈັບ 09 ຄົນ ແລະ ເສຍຊີວິດ 03 ຄົນ, ເດັກນ້ອຍທັງໝົດ 12 ຄົນ, (ຍິງ 04 ຄົນ, ຊາຍ 08 ຄົນ) ບາດເຈັບ 12 ຄົນ ແລະ ເສຍຊີວິດ 04 ຄົນ. ສາເຫດແມ່ນຍ້ອນ ການດັງໄຟ, ຂຸດດິນເຮັດຮົ້ວສ່ວນ, ຕັດຫຍ້າ, ຫຼິ້ນລະເບີດ.

ລາຍງານຄວາມຄືບໜ້າກ່ຽວກັບການເຊື່ອມສານບົດບາດຍິງ-ຊາຍ ໃນຂະແໜງການ ລບຕ ດັ່ງນີ້:

- ໄດ້ສຳເລັດການລົງເກັບກຳຂໍ້ມູນກ່ຽວກັບບົດບາດ ຍິງ-ຊາຍ ໃນຂະແໜງການ ລບຕ ທີ່ ແຂວງ ບໍລິຄຳໄຊ ແລະ ແຂວງຊຽງຂວາງ ໃນເດືອນມັງກອນ ຫາ ເດືອນກຸມພາ 2023;
- ໄດ້ສຳເລັດການລາຍງານຜົນການສຶກສາ ບົດບາດ ຍິງ-ຊາຍ ໃນຂະແໜງການ ລບຕ ແລະ ຈະດຳເນີນການຈັດພິມ;
- ໄດ້ແຕ່ງຕັ້ງຜູ້ປະສານງານດ້ານບົດບາດ ຍິງ-ຊາຍ ໃນກຸ່ມວິຊາການຕ່າງໆ ເຊັ່ນ: EORE, CL, IM ແລະ VA;
- ປະຈຸບັນກຳລັງຮ່າງພາລະບົດບາດ, ໜ້າທີ່ ແລະ ຄວາມຮັບຜິດຊອບຂອງຜູ້ປະສານງານດ້ານ ບົດບາດ ຍິງ-ຊາຍ
- ໄດ້ຮ່າງແຜນປະຕິບັດງານດ້ານບົດບາດ ຍິງ-ຊາຍ ໃນຂະແໜງການ ລບຕ ສຳລັບປີ 2023-2024;
- ກຳລັງດຳເນີນການຈ້າງຊ່ຽວຊານ ຈາກພາຍໃນ ແລະ ຕ່າງປະເທດເພື່ອມາປັບປຸງຄູ່ມືຝຶກອົບຮົມດ້ານບົດບາດ ຍິງ-ຊາຍ ໃນຂະແໜງການ ລບຕ

ໃນ 3 ເດືອນທ້າຍປີ 2023 ຈະໄດ້ສືບຕໍ່ ປັບປຸງຄູ່ມືຝຶກອົບຮົມດ້ານບົດບາດ ຍິງ-ຊາຍ ໃນຂະແໜງການ ລບຕ, ຈັດກອງປະຊຸມເພື່ອຮັບຮອງເອົາຮ່າງພາລະບົດບາດ, ໜ້າທີ ແລະ ຄວາມຮັບຜິດຊອບຂອງຜູ້ປະສານງານດ້ານບົດບາດ ຍິງ-ຊາຍ ແລະ ພ້ອມນັ້ນກໍ່ຈະຈັດຝຶກອົບຮົມບົດບາດ ຍິງ-ຊາຍ ໃນຂະແໜງການ ລບຕ.

4. ຜົນສຳເລັດຂອງກອງປະຊຸມ:

4.1. ຜູ້ເຂົ້າຮ່ວມກອງປະຊຸມໄດ້ຮັບຮູ້ການຈັດຕັ້ງປະຕິບັດໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ຂອງບັນດາວິງການປະຕິບັດງານ ປະຈຳໄຕມາດ 03 ແລະ ແຜນການວຽກຈຸດສຸມ ໄຕມາດ 4, 2023;

4.2. ຜູ້ເຂົ້າຮ່ວມກອງປະຊຸມໄດ້ຮູ້ຜົນການຈັດຕັ້ງປະຕິບັດ ທີ່ຕົກລົງເປັນເອກະພາບກັນໃນກອງປະຊຸມປະຈຳໄຕມາດ 2 ອັນໃດທີ່ປະຕິບັດໄດ້ ແລະ ອັນໃດທີ່ຍັງສືບຕໍ່;

4.3. ຜູ້ເຂົ້າຮ່ວມກອງປະຊຸມໄດ້ຮັບຮູ້ຜົນຂອງການຕິດຕາມຊຸກຍູ້ ວິງການປະຕິບັດງານ ຢູ່ ແຂວງອັດຕະປື ແລະ ແຂວງສາລະວັນ ປະຈຳໄຕມາດ;

4.4. ຜູ້ເຂົ້າຮ່ວມກອງປະຊຸມໄດ້ຮັບສຳເລັດຂອງວຽກງານຄຸ້ມຄອງໂຄສະນາສຶກສາຄວາມສ່ຽງໄພ ຈາກ ລບຕ 9 ເດືອນຕົ້ນປີ ແລະ ແຜນ 3 ເດືອນທ້າຍປີ 2023;

4.5. ໄດ້ຮັບຮູ້ຂໍ້ມູນຈຳນວນສະຖິຕິ ການເກີດອຸປະຕິເຫດ ແລະ ສາເຫດທີ່ພາໃຫ້ເກີດອຸປະຕິເຫດ ຈາກ ລບຕ;

4.6. ຮັບຮູ້ຄວາມຄືບໜ້າການເຊື່ອມສານບົດບາດຍິງ-ຊາຍ ເຂົ້າໃນຂະແໜງການ ແກ້ໄຂບັນຫາ ລະເບີດບໍ່ທັນແຕກ ທີ່ຕົກຄ້າງ ຢູ່ ສປປ ລາວ;

4.7. ຮັບຮູ້ກ່ຽວກັບການທົບທວນມາດຕະຖານແຫ່ງຊາດ ບົດທີ 13 ທີ່ຕິດພັນກັບວຽກໂຄສະນາສຶກສາຄວາມສ່ຽງໄພ ຈາກ ລບຕ;

4.8. ຜູ້ເຂົ້າຮ່ວມກອງປະຊຸມໄດ້ຮັບຮູ້ວຽກຜົນການແນະນຳ ການສຳຫຼວດຄວາມຮັບຮູ້, ພຶດຕິກຳ ແລະ ທັດສະນະຄະຕິກ່ຽວກັບ ຄວາມອັນຕະລາຍ ຂອງ ລະເບີດບໍ່ທັນແຕກ ທີ່ຕົກຄ້າງ ຢູ່ ສປປ ລາວ.

5. ກອງປະຊຸມເອກະພາບດັ່ງນີ້:

- ກອງປະຊຸມໄດ້ເອກະພາບໃຫ້ບັນດາອົງການປະຕິບັດງານສົ່ງແຜນການເຄື່ອນໄຫວ ກິດຈະກຳແຕ່ລະໄຕມາດ ທີ່ຈະລົງເຄື່ອນໄຫວໂຄສະນາ ໃຫ້ຫ້ອງການ ຄຊກລ ກ່ອນ 1 ອາທິດປະຕິບັດວຽກ;
- ກອງປະຊຸມເຫັນດີໃຫ້ບັນດາອົງການປະຕິບັດງານສົ່ງບົດລາຍງານຜົນສຳເລັດ ແລະ ແຜນເຄື່ອນໄຫວຂອງເດືອນສຸດທ້າຍ ໃນວັນທີ 15 ທຸກໆ ໄຕມາດ;
- ກອງປະຊຸມໄດ້ເຫັນດີໃຫ້ແຊຊ ສະຖິຕິອັບເດດລ່າສຸດ ຈຳນວນການເກີດອຸປະຕິເຫດ, ຜູ້ໄດ້ຮັບບາດເຈັບ ແລະ ເສຍຊີວິດລົງໃນກຸ່ມໂຄສະນາ ເພື່ອເປັນຂໍ້ມູນໃນການອອກຂ່າວ ຂອງບັນດາ ວິທະຍຸທະຍຸ 10 ແຂວງ;
- ເຫັນດີໃຫ້ໜ່ວຍງານຄຸ້ມຄອງໂຄສະນາສຶກສາຄວາມສ່ຽງໄພ ຈາກ ລບຕ ລົງຕິດຕາມຊຸກຍູ້ ອົງການປະຕິບັດງານ ເຊັ່ນ: ກອງກວດກູ້ເພື່ອມະນຸດສະທຳ 58 ຢູ່ແຂວງ ບໍລິຄຳໄຊ, ແຂວງວຽງຈັນ, ອົງການ ແມັກ ຢູ່ແຂວງຊຽງຂວາງ, ຄຳມ່ວນ, ອົງການ ຮາໂລທັຣດ ແລະ ຄກລ ຢູ່ແຂວງສະຫັວນນະເຂດ, ອົງການ ເພື່ອມະນຸດສະທຳ ແລະ ການມີສ່ວນຮ່ວມ ແຂວງຫົວພັນ ແລະ ແຂວງຜົ້ງສາລີ, ອົງການ ເທີຣາລີນາຍຊານ ແຂວງຊຽງຂວາງ ແລະ ຕິດຕາມຊຸກຍູ້ ການໂຄສະນາຜ່ານທາງລາຍການ ວິທະຍຸ ແຂວງໄຊສົມບູນ, ແຂວງວຽງຈັນ, ແຂວງສະຫັວນະເຂດ, ຫຼວງພະບາງ ແລະ ຫົວພັນ,
- ກອງປະຊຸມເຫັນດີໃຫ້ບັນດາອົງການປະຕິບັດງານ ຮີບຮ້ອນຈັດພິມອຸປະກອນໂຄສະນາ ແລະ ອຸປະກອນແຈກຢາຍ ເພື່ອສະໜັບສະໜູນວຽກໂຄສະນາ ເພາະກວດເບິ່ງໃນງົບປະມານ ທີ່ລະບຸໃນບົດບັນທຶກຄວາມເຂົ້າໃຈ (MOU) ສຳລັບ ໂປດສະເຕີທີ່ຈະພະລິດໃໝ່ ແມ່ນໃຫ້ເຮັດໜັງສືສະເໜີມາຜ່ານຫ້ອງການ ຄຊກລ ເສຍກ່ອນ;
- ສຳລັບໂປດສະເຕີ ລະເບີດຝັງດິນ (ມີນ) ທີ່ບັນດາອົງການມີແຜນຈະພະລິດແຈກຢາຍໃຫ້ມາຜ່ານຫ້ອງການ ຄຊກລ ເພື່ອຮັບຮອງ;
- ກອງປະຊຸມໄດ້ເຫັນດີໃຫ້ບັນດາອົງການປະຕິບັດງານ ເຊີນໜ່ວຍງານຄຸ້ມຄອງໂຄສະນາສຶກຄວາມສ່ຽງໄພຈາກ ລບຕ ແລະ ຕ້ອງລະບຸໜ່ວຍງານໃສ່ພ້ອມ ເພື່ອເຂົ້າຮ່ວມປະຊຸມນຳ ເຊັ່ນ: ກອງປະຊຸມສະຫຼຸບລາຍງານການຈັດຕັ້ງປະຕິບັດວຽກງານ 6 ເດືອນຕົ້ນປີ ແລະ 6 ເດືອນທ້າຍ ເພື່ອຕິດຕາມການຈັດຕັ້ງປະຕິບັດ;
- ກອງປະຊຸມໄດ້ເຫັນດີໃຫ້ບັນດາອົງການປະຕິບັດງານ ສ້າງຄວາມເຂັ້ມແຂງໃຫ້ພະນັກງານພາຍໃນ ອົງການຂອງຕົນໃນການຝຶກອົບຮົມຫຼັກສູດໂຄສະນາ ໂດຍເຊີນເອົາໜ່ວຍງານທີ່ກ່ຽວຂ້ອງເຂົ້າຮ່ວມ;
- ກອງປະຊຸມໄດ້ເຫັນດີໃຫ້ໜ່ວຍງານຄຸ້ມຄອງໂຄສະນາສຶກສາຄວາມສ່ຽງໄພ ຈາກ ລບຕ ຈັດສັນງົບປະມານ ທີ່ຍັງເຫຼືອຈາກ ການຈ່າຍໂຄສະນາຜ່ານທາງລາຍການວິທະຍຸ 10 ແຂວງ ນຳໃຊ້ເຂົ້າໃນການຈັດຝຶກອົບຮົມໃຫ້ ກົມສື່ມວນຊົນ ແລະ ບັນດາວິທະຍຸ 10 ແຂວງ ໃນການຂຽນຂ່າວ, ພັດທະນາສື່ໂຄສະນາ ພະລິດສະປອດໂຄສະນາ;
- ກອງປະຊຸມໄດ້ເຫັນດີໃຫ້ບັນດາອົງການປະຕິບັດງານ ລາຍງານເຂົ້າຖານຂໍ້ມູນຂອງຫ້ອງການ ຄຊກລ ຜູ້ທີ່ໄດ້ຮັບຜົນປະໂຫຍດ ແລະ ໃຫ້ມີການແຍກເພດ ຜູ້ໃຫ່ຍ ຍິງ-ຊາຍ ແລະ ເດັກນ້ອຍ ຍິງ-ຊາຍ;

- ກອງປະຊຸມໄດ້ເອກະພາບກັນ ສ່ວນການປະເມີນທາງ ວິທະຍຸ ຫລື ມີເດຍ ທາງອອນລາຍ ວິທະຍຸ ໂທລະພາບ ເຟດບຸກ ຢູທູບ ແມ່ນມີມາແລ້ວ ແຕ່ຄວນມີລະອຽດໃນຟອມເຊັ່ນ: ຄວນມີຜູ້ໄດ້ຮັບຜົນປະໂຫຍດຜູ້ຮັບຟັງ ແລະ ນັບຈຳນວນວິວ, ຈຳນວນດາວໂຫລດ, ຈຳນວນຄັ້ງການຕອບໂຕ້ຈາກສະມາຊິກຜູ້ທີ່ຊົມໃຊ້ສື່ເຊັ່ນ (ຈຳນວນກົດໄລ້, ກົດແຊ, ເຊບ, ຄຳເຫັນ ແລະ ອື່ນໆ) ຈຳນວນຄັ້ງທີ່ໄດ້ມີການເຜີຍແຜ່ເນື້ອຫາຜ່ານສື່ ຈຳນວນເວລາອອກອາກາດ ຈຳນວນການເຂົ້າຊົມຂອງຜູ້ເປັນສະມາຊິກ ຫລື ຢູເຊີ;
- ກອງປະຊຸມໄດ້ເຫັນດີໃຫ້ບັນດາອົງການປະຕິບັດງານ ເພີ່ມທະວີເອົາໃຈໃສ່ໂຄສະນາຜົນຮ້າຍຂອງ ລບຕ ໃຫ້ສຳເລັດຕາມແຜນການ ປະຈຳໄຕມາດ ແລະ ແຜນປີ 2023;
- ເຫັນດີໃຫ້ພາກສ່ວນທີ່ກ່ຽວຂ້ອງ ເປັນຕົ້ນແມ່ນ ກະຊວງ ສຶກສາທິການ ແລະ ກິລາ, ກະຊວງ ຖະແຫຼງຂ່າວ ວັດທະນະທຳ ແລະ ທ່ອງທ່ຽວ, ສູນກາງຊາວໜຸ່ມຊາວປະຊາຊົນປະຕິວັດລາວ, ວິທະຍຸກະຈາຍສຽງແຫ່ງຊາດ ແລະ ບັນດາອົງການປະຕິບັດງານ ສົ່ງແຜນການເຄື່ອນໄຫວໃຫ້ຫ້ອງການ ຄຊກລ ເພື່ອຈະໄດ້ນຳເອົາເຂົ້າແຜນປີ 2024;
- ໃຫ້ບັນອົງການປະຕິບັດງານສືບຕໍ່ໂຄສະນາສຶກສາຄວາມສ່ຽງໄພ ຈາກ ລບຕ ແລະ ນຳເອົາບັນຫາມາແລກປ່ຽນຂໍ້ມູນຮ່ວມກັນເພື່ອຈະນຳເອົາບັນຫາດັ່ງກ່າວມາແກ້ໄຂ.

6. ຂໍ້ສະເໜີ

- ກອງປະຊຸມສະເໜີ ໃຫ້ໜ່ວຍງານຄຸ້ມຄອງໂຄສະນາເປັນເຈົ້າການ ໃນການຕິດຕາມຊຸກຍູ້ ບັນດາອົງການປະຕິບັດງານ ເພາະບາງອົງການບໍ່ໄປຕາມແຜນເຄື່ອນໄຫວ ເຊິ່ງສະແດງອອກໃນຕົວຊີ້ວັດໜ້າວຽກ;
- ອົງການຮາໂລທຣັດສະເໜີວ່າ ໃຫ້ມີການອັບເດດ ມາດຕະຖານແຫ່ງຊາດ ບົດທີ 13 ສະເໜີໃຫ້ຕື່ມ ມາດຕະການ ວ່າດ້ວຍການກວດກາປະເມີນການນຳສະເໜີສຶກສາຄວາມສ່ຽງໃນແຕ່ລະຄັ້ງ ກ່ອນ ແລະ ຫລັງຂອງການນຳສະເໜີສຶກສາຄວາມສ່ຽງ ໂດຍສະເພາະແມ່ນ ການນຳສະເໜີໃນຮູບແບບຫນ້າຕໍ່ຫນ້າ;
- ກອງປະຊຸມໄດ້ສະເໜີໃຫ້ຫ້ອງການ ຄຊກລ ຈັດການປະຊຸມສະເພາະເພື່ອລົງເລິກ ຄົ້ວຄວ້າ ກ່ຽວກັບໂປດສະເຕີລະບົດຝັງດິນ (ມີນ).
- ກອງປະຊຸມໄດ້ສະເໜີໃຫ້ຫ້ອງການ ຄຊກລ ຈັດສັນງົບປະມານ ທີ່ຍັງເຫຼືອຈາກການຈ່າຍເງິນຄ່າ ໂຄສະນາ ຜ່ານທາງລາຍການ ວິທະຍຸ 10 ແຂວງ ໃນຈຳນວນເງິນ 14.000 ໂດລາສະຫະລັດ ນຳໃຊ້ເຂົ້າໃນການຈັດຝຶກອົບຮົມພັດທະນາສື່ໂຄສະນາ ຂຽນຂ່າວ, ສະປອດໂຄສະນາ ເປັນ 3 ພາສາ: ພາສາລາວ, ພາສາມົ້ງ ແລະ ພາສາຂະມຸ ເພື່ອເຮັດໃຫ້ການໂຄສະນາເປັນວົງກ້ວາງໃຫ້ປະຊາຊົນໄດ້ຮັບຮູ້ເຖິງຜົນຮ້າຍຂອງ ລບຕ.

ດັ່ງນັ້ນ, ຈຶ່ງຮຽນລາຍງານມາຍັງທ່ານເພື່ອຊາບ ແລະ ໃຫ້ທິດຊີ້ນຳຕາມເຫັນສົມຄວນດ້ວຍ.

ປະທານກອງປະຊຸມ

ຫ້ອງການ ຄຊກລ

ບຸນເພັງ ສິສະຫວັດ

ຜູ້ລາຍງານ

ຈັນສະໜອມ